ILO brief

International Labour Organization | ILO/Korea Partnership Programme

# ການຈູງໃຈ ແລະ ການປະຕິບັດກົດໝາຍ

ມັງກອນ 2023

ວິທີການກວດກາແຮງງານ ແລະ ປະກັນສັງຄົມຄວນປັບຕົວໃຫ້ເຂົ້າກັບສະພາບການສະເພາະ ແລະ ຄວາມຕ້ອງການຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານໂດຍສະເພາະບ່ອນທີ່ມີການຈ້າງງານນອກລະບົບຫຼາຍ. ເພື່ອຕອບສະໜອງຄວາມຕ້ອງການເຫຼົ່ານັ້ນ,ມັນຈຳເປັນຕ້ອງໄດ້ດັດປັບກອບກົດຫມາຍທີ່ນຳໃຊ້ເພື່ອສ້າງຊັບພະຍາກອນມະນຸດ ແລະ ການເງິນສຳລັບການກວດກາ, ພ້ອມທັງປັບປຸງວິທີການກວດກາ.ລັດຖະບານຍັງສາມາດເລືອກທີ່ຈະຫຼຸດຄ່າໃຊ້ຈ່າຍໃນການປະຕິບັດກົດໝາຍໂດຍຜ່ານການປະເມີນອາກອນ ແລະ ການຈ່າຍເງິນສົມທົບແບບງ່າຍດາຍ. ພ້ອມກັນນັ້ນ, ກໍ່ຍັງຈຳເປັນທີ່ຈະຕ້ອງເພີ່ມຄວາມຮັບຮູ້ໃຫ້ແກ່ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານກ່ຽວກັບສິດ ແລະ ພັນທະຂອງຕົນເພື່ອໃຫ້ເຂົາເຈົ້າມີສ່ວນຮ່ວມໃນການຮັບປະກັນການປະຕິບັດມາດຕະການຕ່າງໆ. ການແກ້ໄຂບັນຫາດ້ານໄອທີ ແລະ ການປະສານງານທີ່ດີລະຫວ່າງອົງການຈັດຕັ້ງຕ່າງໆກໍ່ອາດສາມາດຊ່ວຍໄດ້.

ໃນປະເທດບຣາຊິນ, ລະບຽບພື້ນຖານດ້ານພາສີສຳລັບຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍໄດ້ຖືກກຳນົດໄວ້ໃນກົດໝາຍເລກທີ່ 9317 ໃນປີ 1996, ແລະ ໄດ້ຮັບການປະຕິຮູບເພີ່ມເຕີມໃນປີ 2007. ກົນໄກດັ່ງກ່າວນີ້ຊ່ວຍບໍລິສັດທີ່ມີເງື່ອນໄຂສາມາດຈ່າຍພາສີເປັນປີແທນການຈ່າຍພາສີເປັນເດືອນສຳລັບແປດປະເພດພາສີທີ່ແຕກຕ່າງກັນ.



ສະຖາບັນປະກັນສັງຄົມຂອງ Costa Rica ໄດ້ປະຕິບັດຫຼາຍມາດຕະການເພື່ອປັບປຸງການເກັບເງິນສົມທົບເຂົ້າກອງທຶນປະກັນສັງຄົມຈາກແຮງງານທີ່ປະກອບອາຊີບອິດສະຫຼະ ແລະ ຜູ້ໃຊ້ແຮງງານ. ສະຖາບັນດັ່ງກ່າວນີ້ໄດ້ຈ້າງກຸ່ມເຈົ້າໜ້າທີ່ກວດກາພິເສດເພື່ອກວດກາການລົງທະບຽນແຮງງານປະກອບອາຊີບອິດສະຫຼະເຂົ້າລະບົບ. ເຈົ້າໜ້າທີ່ກວດກາເຮັດວຽກຢູ່ຂະແໜງເສດຖະກິດຫຼາຍແຫ່ງ ແລະ ຕາມເວລາທີ່ແຕກຕ່າງກັນເພື່ອໃຫ້ສາມາດຄອບຄຸມໄດ້ທັງກາງເວັນ ແລະ ກາງຄືນ. ນອກນີ້, ຍັງໄດ້ຈ້າງພະນັກງານບໍລິຫານ ແລະ ກວດກາຈຳນວນໜຶ່ງຕື່ມອີກເພື່ອເພີ່ມຄວາມສາມາດດ້ານບໍລິຫານເພື່ອຕິດຕາມບັນດາວິສາຫະກິດລະເມີດກົດໝາຍ. ສະຖາບັນນີ້ຍັງໄດ້ຈັດສັນຊັບພະຍາກອນເພີ່ມເຕີມເພື່ອເພີ່ມຄວາມສາມາດທາງດ້ານວັດຖຸ, ອຸປະກອນ, ແລະ ເຕັກໂນໂລຊີທີ່ຈຳເປັນໃນການຈັດຕັ້ງປະຕິບັດຍຸດທະສາດນີ້ໃຫ້ປະສົບຜົນສຳເລັດ, ເຊິ່ງໄດ້ຂະຫຍາຍການສົມທົບທຶນໃນຂອບເຂດທົ່ວປະເທດ, ລວມທັງແຮງງານທີ່ປະກອບອາຊີບອິດສະຫຼະໃນເຂດຊົນນະບົດນຳອີກ.



ໃນປະເທດມາເລເຊຍ, ການນຳໃຊ້ແອັບພລິເຄຊັ່ນມືຖືເພື່ອຢັ້ງຢືນການລົງທະບຽນວິສາຫະກິດ, ພ້ອມທັງໃຊ້ແອັບພລິເຄຊັນມືຖືໃນການຊອກຫາວິສາຫະກິດທີ່ບໍ່ໄດ້ລົງທະບຽນດ້ວຍ GPS ຜ່ານ Google, ເຮັດໃຫ້ສາມາດຫຼຸດເວລາໃນການກວດສອບ ແລະ ຢັ້ງຢືນວິສາຫະກິດທີ່ບໍ່ໄດ້ລົງທະບຽນລົງຫຼາຍ. ໃນລະຫວ່າງປີ 2015-2016, ຈຳນວນວິສາຫະກິດທີ່ຖືກກວດສອບເພີ່ມຂຶ້ນ 14%, ໃນຂະນະທີ່ຈຳນວນວິສາຫະກິດທີ່ບໍ່ໄດ້ຂຶ້ນທະບຽນໄດ້ຮັບການຢັ້ງຢືນເພີ່ມຂຶ້ນ 23%.



ໃນປະເທດຊາອຶດີອາຣາເບຍ, ອົງການຈັດຕັ້ງສຳລັບການປະກັນສັງຄົມໄດ້ປະຕິບັດລະບົບໃຫມ່ຂຶ້ນເພື່ອລວບລວມ ຂໍ້ມູນການກວດກາທັງຫມົດ (ທັງເຈ້ຍ ແລະ ເອເລັກໂຕຣນິກ) ແລ້ະສາມາດຫຼຸດຜ່ອນໄລຍະເວລາຂອງຂະບວນການກວດກາໂດຍຜ່ານການດຳເນີນການກວດກາພາກສະຫນາມໂດຍອີງໃສ່ທີ່ຕັ້ງພູມສັນຖານ ແລະ ຄວາມຊຳນານຂອງເຈົ້າໜ້າທີກວດກາ. ລ້ະບົບປັນຍາທລະກິດນີ້ໃຊ້ຂໍ້ມູນການກວດກາພາກສະຫນາມຕົວຈິງ ແລະ ດັ່ງນັ້ນຈຶ່ງສາມາດ ຄິດໄລ່ຂໍ້ມູນເປັນວິນາທີ, ເຊິ່ງເຮັດໃຫ້ຈຳນວນຄັ້ງໃນການກວດກາພາກສະຫນາມເພີ່ມຂຶ້ນຢ່າງຫຼວງຫຼາຍ.



ອົງການຕາງໜ້າຜູ້ອອກແຮງງານສາມາດສ້າງບົດບາດສຳຄັນໃນການເຜີຍແຜ່ຂໍ້ມູນຂ່າວສານ ແລະ ອຳນວຍຄວາມ ສະດວກໃນການລົງທະບຽນ. ຢູ່ຟີລິບປິນ, ອົງການຕາງໜ້າຜູ້ອອກແຮງງານເຮັດວຽກໃນຄົວເຮືອນຈັດໃຫ້ມີການເດີນທາງໄປບດລົງທະບຽນປະກັນສັງຄົມ, ສູນໃຫ້ຄຳປຶກສາ, ແລະ ອົງການຈັດຕັ້ງລັດຖະບານອື່ນໆ.



ບົດສະຫຼຸບຫຍໍ້ຂອງອົງການແຮງງານສາກົນແມ່ນສ່ວນໜຶ່ງຂອງຜົນການສຶກສາດ້ານປະລິມານຂອງກຳລັງແຮງງານ ແລະ ໂຄງສ້າງດ້ານວິສາຫະກິດໃນ ສປປ ລາວ ເພື່ອເຂົ້າໃຈເລິກເຊິ່ງກ່ຽວກັບພາບລວມຂອງແຮງງານນອກລະບົບເພື່ອນຳມາສູ່ການອອກແບບນະໂຍບາຍປະກັນສັງຄົມ. ການສຶກສາຄັ້ງນີ້ແມ່ນໄດ້ຮັບທຶນສະໜັບສະໜູນຈາກໂຄງການຮ່ວມມືຂອງອົງການແຮງງານສາກົນ ແລະ ສ. ເກົາຫຼີ ແລະ ດຳເນີນການສຶກສາໂດຍສະຖາບັນຄົ້ນຄ້ວາດ້ານການຄຸ້ມຄອງນະໂຍບາຍອອດສຟອດ.

ໂດຍການຮ່ວມມືກັບ

ລາຍລະອຽດການຕິດຕໍ່

**ສຳນັກງານອົງການແຮງງານສາກົນສຳລັບພາກພື້ນອາຊີ ແລະ ປາຊີຟິກ**
ຕຶກສະຫະປະຊາຊາດ, ຖະໜົນລາດສະດຳເນີນນອກ, ບາງກອກ 10200, ຣາຊາອານາຈັກໄທ

ໂທລະສັບ: +66 2288 1234
ແຟັກ: +66 2280 1735
ອີເມວ: BANGKOK@ilo.org

ນາງ ເລີບລິນ ເດ — ຜູ້ຈັດການໂຄງການ — ອີເມວ: del@ilo.org
ທ. ທອງເຫຼັກ ຊິງ — ຜູ້ປະສານງານໂຄງການ — ອີເມວ: thongleck@ilo.org
ນ. ນຸດທອງ ອາລຸນທອງ — ຜູ້ປະສານງານໂຄງການ — ອີເມວ: alounthong@ilo.org

© ອົງການແຮງງານສາກົນ 2023